# ເລື່ອງ ອ້າຍໜູນ້ອຍ

ແຈກລ້າງ









**ເລື່ອງ ອ້າຍໝູນ້ອຍ**

ໂດຍ: ສຳນັກພິມ ອ້າຍໝູນ້ອຍ, ຈັດພິມໂດຍ: ສຳນັກພິມ ອ້າຍຫນູນ້ອຍ, ຫຼວງພະບາງ. ທະບຽນອະນຸຍາດ: ລທບ109ພຈ09022015 ພິມຄັ້ງທີ 1 ພິມທີ່ ໂຮງພິມ ດາຕາ ເປເປີ (ປະເທດໄທ), 2015. ຈຳນວນ 15,000 ຫົວ

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

808.899282 --dc21

ISBN 978-9932-03-235-8

ປຶ້ມຫົວນີ້ສາມາດພິມອອກໄດ້ ກໍ່ຍ້ອນການສະໜັບສະໜູນຂອງ ເຣ ຟອກເນີ. ຂໍຂອບໃຈຫຼາຍໆ!



ແມວໃດກໍ່ຕາມ... ພວກເຮົາກໍ່
ດີໃຈທີ່ຈະນຳສະເໜີ:



ເລື້ອງ

# ອ້າຍໜູ
# ນ້ອຍ

ປະຫວັດຄວາມເປັນມາຂອງ...

ສຳນັກພິມອ້າຍໜູນ້ອຍ, ຫຼວງພະບາງ

# ເລື່ອງຂອງອ້າຍໜູນ້ອຍເລີ່ມຂຶ້ນ...

...ໃນປີ 1983 ມີເດັກຊາຍຄົນໜຶ່ງຊື່ ຄຳຫຼ້າ ໄດ້ເກີດຢູ່ບ້ານຄອນຄຳ ເຊິ່ງຫ່າງຈາກຫຼວງພະບາງປະມານ 50ກມ. ລາວເປັນຄົນທຳອິດໃນຄອບຄົວຂອງລາວທີ່ຮຽນອ່ານ.

ເມື່ອ ຄຳຫຼ້າ ອາຍຸໄດ້ 12 ປີ ຄອບຄົວຂອງລາວເຫັນວ່າລາວເປັນຄົນສະຫຼາດ ແລະ ຮຽນເກັ່ງ. ສະນັ້ນ ລາວຄວນບວດເປັນອ້າຍຈົວນ້ອຍ ແລ້ວຍ້າຍລົງມາທີ່ຫຼວງພະບາງ ເພື່ອສຶກສາຕໍ່ທີ່ໂຮງຮຽນສົງ. ລາວເດີນທາງດ້ວຍເຮືອຈັກນ້ອຍໆ ເຊິ່ງໃຊ້ເວລາຫົກຊົ່ວໂມງຈຶ່ງມາເຖິງຫຼວງພະບາງ. ຈາກນັ້ນ ລາວກໍ່ບໍ່ໄດ້ເຫັນໜ້າຄອບຄົວອີກເປັນເວລາເກືອບປີ.

"ຕອນທຳອິດຂ້ອຍບໍ່ມີຄວາມສຸກ ແລະ ຄິດຮອດບ້ານຫຼາຍ, ບາງຄັ້ງຂ້ອຍກໍ່ໄຫ້ກັບບ້ານ," ລາວເລົ່າສູ່ຟັງ. ຕໍ່ມາລາວກໍ່ລຶ້ງເຄີຍກັບຊີວິດອ້າຍຈົວ, ລາວໃຊ້ຊີວິດຢູ່ໃນວັດ 6 ປີກວ່າ ແລະ ໄດ້ຮຽນຮູ້ການໃຊ້ຊີວິດຫຼາຍຢ່າງທັງທາງໂລກ ແລະ ທາງທຳ. ລາວມີຄວາມສຸກຫຼາຍທີ່ສຸດໃນຊ່ວງເວລານັ້ນ. ລາວຢ້ຳ.

ບາງຄັ້ງ ລາວເຫັນນັກທ່ອງທ່ຽວທີ່ມາທ່ຽວຊົມຫຼວງພະບາງສ່ວນຫຼາຍມັກອ່ານປຶ້ມ, ອ່ານແມ່ນແຕ່ຕອນນອນພັກຜ່ອນ ແລະ ກິນເຂົ້າ. "ເປັນຫຍັງພວກເຂົາຈຶ່ງອ່ານປຶ້ມແບບນັ້ນ?" ຄຳຫຼ້າເວົ້າດ້ວຍຄວາມສົງໄສ ແລະ ເປັນຄຳຖາມທີ່ບໍ່ມີຄຳຕອບໃຫ້ລາວມາເປັນເວລາຫຼາຍປີ.





# ຊາຊ່າ

ໃນຂະນະທີ່ ຄຳຫຼ້າ ກຳລັງເດີນທາງໄກດ້ວຍເຮືອລົງມາຫຼວງພະບາງ ລຸງຊາຊ່າ ກໍ່ກຳລັງຂາຍບໍລິສັດຈັດພິມຢູ່ອາເມຣິກາ ເຊິ່ງລາວໄດ້ບໍລິຫານມາເປັນເວລາ15 ປີ ແລະ ໃນປີ 2003 ລາວໄດ້ມາຢ້ຽມຢາມປະເທດລາວ.

ລາວຈື່ວ່າ: "ການທ່ອງທ່ຽວຄັ້ງທຳອິດຂອງຂ້ອຍໃນຕອນນັ້ນ ຂ້ອຍບໍ່ເຄີຍເຫັນປຶ້ມທີ່ເປັນພາສາລາວຈັກຫົວເລີຍ. ຂ້ອຍຈຶ່ງຄິດວ່າ: ຂ້ອຍຈະຊ່ວຍໄວໜຸ່ມລາວຮຽນຮູ້ທັກສະການຈັດພິມປຶ້ມ ເພື່ອຊ່ວຍພັດທະນາການສຶກສາຢູ່ລາວໄດ້ແນວໃດ?




# ສີພອນ

ລຸງຊາຊ່າ ໄດ້ພົບກັບ ສີພອນ ລາວເປັນນັກສຶກສາຢູ່ວິທະຍາໄລຄູ ເຊິ່ງເປັນຜູ້ທີ່ຈະຂັບເຄື່ອນສູ່ຄວາມສໍາເລັດ.

ລຸງຊາຊ່າ ຊ່ວຍ ສີພອນ ເຮັດຮ້ານຄອມພິວເຕີ ເພື່ອໃຫ້ນັກຮຽນທີ່ຢາກຮຽນຮູ້ທັກສະການນໍາໃຊ້ຄອມພິວເຕີ.

ລູກຈ້າງຄົນທໍາອິດຂອງ ສີພອນ ແມ່ນ ຄໍາຫຼ້າ ເຊິ່ງພວກເຂົາເຄີຍໄດ້ບວດເປັນອ້າຍຈົວນໍາກັນ ແລະ ເປັນໝູ່ສະໜິດກັນ.

ນັກສຶກສາຫຼາຍຄົນໄດ້ນໍາໃຊ້ຄອມພິວເຕີ ເພື່ອຮຽນພາສາອັງກິດ. ລຸງຊາຊ່າ ມັກໄປແວະຢາມ ເພື່ອຊ່ວຍນັກຮຽນຝຶກຊ້ອມທັກສະດ້ານພາສາ ແລະ ເພື່ອລົມກັບ ສີພອນ ແລະ ຄໍາຫຼ້າກ່ຽວກັບແນວຄິດການຈັດພິມປຶ້ມ.

# ປຶ້ມຫົວທຳອິດ

ໃນເວລາດຽວກັນນັ້ນ ລຸງຊາຊ່າໄດ້ປຶກສາຫາລືກັບລັດຖະບານ, ອາຈານ ແລະ ນັກສຶກສາກ່ຽວກັບເປົ້າໝາຍການຈັດພິມຂອງລາວ, "ປຶ້ມທີ່ເຮັດໃຫ້ມ່ວນໃນການອ່ານການຮຽນ." ມີຫຼາຍຄົນເຄີຍເຫັນແຕ່ປຶ້ມຕຳລາເທົ່ານັ້ນ ເລີຍບໍ່ຄ່ອຍມີໃຜເຂົ້າໃຈວິທີເຮັດປຶ້ມທີ່ອ່ານ ເພື່ອຄວາມມ່ວນຊື່ນ.

ດັ່ງນັ້ນ ສີພອນ, ຄຳຫຼ້າ ແລະ ລຸງຊາຊ່າ ໄດ້ຂຽນປຶ້ມຫ້າຫົວທຳອິດຂອງພວກເຮົາອອກມາ.




ສີພອນ ໄດ້ຂຽນນິທານພື້ນເມືອງທີ່ແມ່ເຖົ້າຂອງລາວເຄີຍໄດ້ເລົ່າສູ່ລາວຟັງໃນຕອນແລງລິງໃສ່ເຈ້ຍ. "ປຶ້ມແມວຖືສິນ" ກາຍເປັນປຶ້ມຫົວໜຶ່ງທີ່ນິຍົມກັນອ່ານຫຼາຍທີ່ສຸດ ແລະ ລາວຍັງໄດ້ຂຽນນິທານຍອດນິຍົມອີກສາມເລື່ອງນັບຕັ້ງແຕ່ນັ້ນເປັນຕົ້ນມາ.







ຄຳຫຼ້າ ໄດ້ຂຽນປື້ມຕົວອັກສອນທີ່ນຳໃຊ້ຄຳສຳຜັດ ແລະ ກາຕູນຕະຫຼົກ ເພື່ອແນະນຳພະຍັນຊະນະພາສາລາວແຕ່ລະຕົວ. "*ກິນ ແຂ້ ຄວາຍ*" ກໍ່ແມ່ນປື້ມຫົວໜຶ່ງທີ່ນິຍົມກັນອ່ານຫຼາຍ ຈົນເດັກນ້ອຍຫຼາຍຄົນສາມາດທ່ອງຂຶ້ນໃຈ.

ລຸງຊາຊ່າ ໄດ້ຂຽນປື້ມ "*ບ໊ອບໃນບາງກອກ*" ເປັນປື້ມກ່ຽວກັບລີງນ້ອຍທີ່ທັງດີໃຈ ແລະ ຕື່ນເຕັ້ນ ໃນການເດີນທາງຄັ້ງທຳອິດຫາເມືອງໃຫຍ່... ເຊິ່ງເຫດການອາດຈະຄ້າຍຄືກັບການເດີນທາງຂອງເດັກນ້ອຍ.





# ຫ້ອງການຫຼັງທຳອິດ

ພວກເຮົາບໍ່ສາມາດຈັດພິມປຶ້ມເຫຼົ່ານັ້ນເທື່ອ ເພາະຍັງບໍ່ທັນມີໃບອະນຸຍາດໃນການຈັດພິມ. ໃນຂະນະທີ່ພວກເຮົາແລ່ນໃບອະນຸຍາດ, ພວກເຮົາກໍ່ສືບຕໍ່ຂຽນປຶ້ມຫົວໃໝ່ໄປນຳ.

ອຸ່ນຫຼ້າ (ເບື້ອງຊ້າຍ) ເປັນນັກຮຽນສິລະປະກຳຢູ່ວຽງຈັນ ລາວໄດ້ແຕ້ມຮູບປະກອບປຶ້ມສ່ວນຫຼາຍ. ທອງຄຳ (ເຄິ່ງກາງ) ໄດ້ແປພາສາໃຫ້ຫຼາຍຫົວ. ໃນຮູບນີ້ ເຂົາເຈົ້າທັງສອງກຳລັງເຮັດວຽກນຳ ຄຳຫຼ້າ ເປັນປຶ້ມຂໍ້ມູນຈິງຊື່ “*ສັດໃນອາຟຣິກາ*” ຢູ່ “ຫ້ອງການ” ຫຼັງທຳອິດ ເຊິ່ງເປັນຫ້ອງນອນຂອງເຮືອນພັກໃນວຽງຈັນ.

ມັນເປັນຫ້ອງການທີ່
ດີຫຼາຍ ມັນມີຮອດ
ຫ້ອງນ້ຳ!





# ວຽກງານເບື້ອງຕົ້ນ

ວຽກງານກຳລັງດຳເນີນໄປດ້ວຍດີ ແລະ ຂະຫຍາຍຕົວ ທັງຄິດວິທີຂຽນຂຽນປຶ້ມເລື່ອງໃໝ່, ແຕ້ມຮູບແບບໃໝ່ ແລ່ນເອກະສານທີ່ຕ້ອງການ ແລະ ອື່ນໆທີ່ກ່ຽວພັນກັບວຽກງານການຈັດພິມ.

ພວກເຮົາຕ້ອງການນັກແຕ້ມຕື່ມ, ສະນັ້ນ ພວກເຮົາຈຶ່ງໄດ້ຈັດງານປະກວດຮູບແຕ້ມຂຶ້ນຢູ່ທີ່ ສູນວັດທະນະທຳເດັກ (ສ.ວ.ດ) ເຊິ່ງທ້າວ ທາທ່າວ ອາຍຸ 16 ປີ ເປັນໜຶ່ງໃນຜູ້ທີ່ຊະນະເລີດ ແລະ ລາວໄດ້ແຕ້ມຮູບປະກອບປຶ້ມ "*ແມວຖືສິນ.*" ທັນທີ.



ເຊັ່ງຊີ່ງ ເປັນນັກຮຽນຢູ່ໂຮງຮຽນເດັກກຳພ້າ ຕອນທີ່ລາວຊະນະເລີດງານປະກວດຄຳສຸພາສິດພື້ນເມືອງລາວ ແລະ ສີມືຂອງລາວກໍ່ໄດ້ປະກົດຢູ່ໃນປຶ້ມຫົວນັ້ນ. ຈາກນັ້ນລາວ ແລະ ໝູ່ຂອງລາວ ຊື່ ກົ່ງລີ ກໍ່ໄດ້ແຕ້ມຮູບປະກອບປຶ້ມ "*ມ່ວນກັບໝາກໄມ້.*"

# ຕົວໜັງສືລາວ




ຄອມພິວເຕີ ອອກແບບເພື່ອພິມພາສາອັງກິດ. ມີລະບົບທີ່ສາມາດພິມພາສາລາວຢູ່ໃນຄອມພິວເຕີກໍ່ຈິງ ແຕ່ມັນຫຍຸ້ງຍາກໃນການເຮັດປຶ້ມ.

ສະນັ້ນ ພວກເຮົາຈຶ່ງອອກແບບຕົວໜັງສື ແລະ ລະບົບການນຳໃຊ້ພາສາລາວເອງ. (ຕົວໜັງສື, ລະບົບ ແລະ ວິທີນຳໃຊ້ ມີຢູ່ໃນເວັບໄຊຂອງພວກເຮົາເຊິ່ງຢູ່ໃນ "Special Projects.")



# ພອນສະຫວັນລ້ວນໆ

ທ້າວ ຈິດຕະກອນ ອາຍຸ 14 ປີ ຕອນລາວຊະນະລາງວັນທີ 1 ໃນງານປະກວດຮູບແຕ້ມທີ່ອ້າຍໜູນ້ອຍຈັດຂຶ້ນ ແລະ ລາວໄດ້ແຕ້ມຮູບປະກອບປຶ້ມ “*ຄວາຍດີກວ່າເດີມ*” ເຊິ່ງເປັນປຶ້ມກ່ຽວກັບເດັກຊາຍຄົນໜຶ່ງທີ່ຄິດປ່ຽນແປງຄວາຍຂອງລາວ.

ຜົນງານດີທີ່ສຸດຂອງລາວແມ່ນເລື່ອງ “*ກາງເວັນລຶກລັບ*” ເປັນເລື່ອງທີ່ລາວຂຽນ ແລະ ແຕ້ມຮູບປະກອບເອງຕອນອາຍຸໄດ້ 16 ປີ ເຊິ່ງປັນເລື່ອງກ່ຽວກັບເດັກຊາຍຄົນໜຶ່ງທີ່ປະພຶດຕົນບໍ່ເໝາະສົມ ແລະ ບໍ່ດົນລາວກໍ່ຮູ້ວ່າຕົນເອງຕົກຢູ່ໃນໂລກທີ່ຜິດສະວິງໄປ.





# ໜູກຳເນີດຂຶ້ນ

ໃນທີ່ສຸດພວກເຮົາ
ກໍ່ມາຮອດຕອນທີ່
ສຳຄັນ!



ເດືອນມິຖຸນາປີ 2006 ເປັນເດືອນທີ່ຍິ່ງໃຫຍ່ ເຊິ່ງ ຄຳຫຼ້າ ກັບ ສີພອນ ໄດ້ຮຽນຈົບຈາກວິທະຍາໄລຄູ. ຄຳຫຼ້າ ໄດ້ຮັບໃບທະບຽນວິສາຫະກິດ ແລະ ໃບທະບຽນຈັດພິມ.

ໃນເດືອນດຽວກັນນັ້ນ ພວກເຮົາກໍ່ໄດ້ເປີດຮ້ານຂຶ້ນ ເຊິ່ງມີໜູຫາກໍ່ທາສີໃໝ່ໆ. ຕອນນັ້ນ ພວກເຮົາມີປຶ້ມພຽງ 6 ຫົວເລື່ອງມາວາງສະແດງຢູ່ຮ້ານ ແລະ ໄດ້ແຂວນປ້າຍທີ່ຂຽນວ່າ “ຮ້ານປຶ້ມອ້າຍໜູນ້ອຍ” ຂຶ້ນ. ພວກເຮົາສືບຕໍ່ເຮັດວຽກຢ່າງໜັກເພື່ອຈັດພິມປຶ້ມຫຼາກຫຼາຍຮູບແບບອອກສູ່ສັງຄົມລາວ. ຕໍ່ມາບໍ່ດົນພວກເຮົາໄດ້ກາຍເປັນສຳນັກພິມທີ່ພິມປຶ້ມຫຼາຍເລື່ອງທີ່ສຸດໃນປະເທດລາວ ແລະ ໄດ້ຮັບລາງວັນປຶ້ມດີເດັ່ນແຫ່ງປີ 2009. ເຊິ່ງຄັດເລືອກໂດຍ ກົມພິມຈຳໜ່າຍ ກະຊວງ ຖ.ວ.ທ.



ພາຍຫຼັງທີ່ພວກ
ເຮົາໄດ້ເປີດຮ້ານ
ໃໝ່ ພວກເຮົາກໍ່
ມີຊົ່ວໂມງເລົ່ານິ
ທານຍອດນິຍົມ
ໃຫ້ແກ່ເດັກນ້ອຍ
ອ້ອມແອ້ມຮ້ານ.

ພວກເຮົາໄດ້ແຈກປຶ້ມ
ລ້າໆໃຫ້ເດັກນ້ອຍຄືນ
ລະຫົວ ແລ້ວກໍ່ໄດ້ເຮັດ
"ກ່ອງປ່ຽນປຶ້ມ" ຂຶ້ນ
ເພື່ອໃຫ້ເຂົາເຈົ້າສາ
ມາດມາປ່ຽນເອົາປຶ້ມ
ຫົວໃໝ່ໄປອ່ານ.



ການແລກປ່ຽນປຶ້ມໄດ້ຮັບຄວາມນິຍົມສູງ ແລະ ມັນເຮັດໃຫ້ເດັກນ້ອຍຕື່ນເຕັ້ນກ່ຽວກັບປຶ້ມ ແລະ ການອ່ານ. ພວກເຮົາໄດ້ນຳເອົາປຶ້ມທຸກຢ່າງຂອງພວກເຮົາ ແລະ ປຶ້ມທີ່ເຮົາສາມາດຊອກຊື້ຢູ່ວຽງຈັນມາໃສ່ໃນກ່ອງປ່ຽນປຶ້ມໄວ້.

ແຕ່ພາຍຫຼັງສອງອາທິດກິດຈະກຳກໍ່ເລີ່ມຮ່ວຍລົງ ເນື່ອງຈາກວ່າພວກເຂົາໄດ້ອ່ານທຸກຢ່າງສອງຄັ້ງແລ້ວ.



# ການນຳປຶ້ມສູ່ເດັກນ້ອຍ

ກ່ອນສິ້ນປີ 2006 ພວກເຮົາໄດ້ຈັດພິມປຶ້ມ 15 ຫົວເລື່ອງແລ້ວ. ວຽກຕໍ່ໄປແມ່ນ ການນຳພວກມັນລົງສູ່ເດັກນ້ອຍ.

ທ້າວສອນສຸລິລັດ ມີແນວຄິດສຸດຍອດໃນການຈັດກິດຈະກຳກັບເດັກນ້ອຍ. ລາວໄດ້ຈັດງານແຈກປຶ້ມງານທຳອິດຂຶ້ນຢູ່ທີ່ບ້ານມູນສະຫວາດ ນອກຕົວເມືອງຫຼວງພະບາງ.

ເດືອນຕໍ່ມາ ລາວກໍ່ໄດ້ຈັດງານຫຼາຍຂຶ້ນເລື້ອຍໆ. ໃນປີ 2007 ລາວໄດ້ຈັດງານແຈກປຶ້ມຂຶ້ນ 31ຄັ້ງ.

ໃນປີ 2012 ລາວຈັດໄດ້ອີກ 903ຄັ້ງ...

# ສອນ

ສອນສຸລິລັດ (ສອນ) ອາຍຸ 16 ປີ ຕອນລາວຈັດງານແຈກປຶ້ມຂຶ້ນຄັ້ງທຳອິດ. ຕອນນີ້ລາວບໍລິຫານທີມງານຫຼາຍກວ່າ 25ຄົນ ນຳປຶ້ມລົງຈັດກິດຈະກຳສົ່ງເສີມການອ່ານຢູ່ຕາມໂຮງຮຽນແຫ່ງຕ່າງໆ ທັງໃນຕົວເມືອງ ແລະ ເຂດຫ່າງໄກສອກຫຼີກ. ເພື່ອໃຫ້ເດັກມ່ວນຊື່ນ, ຕື່ນເຕັ້ນ ແລະ ຮັກມັກການອ່ານ.

ລາວຍັງໄດ້ຂຽນບົດເພງກ່ຽວກັບປຶ້ມ ແລະ ການອ່ານ ເຊິ່ງເດັກນ້ອຍຈະຮຽນເອົາຢ່າງກະຕືລືລົ້ນຢູ່ໃນງານແຈກປຶ້ມ. ລາວຍັງໄດ້ຂຽນປຶ້ມອີກເຈັດຫົວດ້ວຍຕົນເອງ.






ສອນຂຽນປຶ້ມເຫຼົ່ານີ້, ເຈົ້າໄດ້ອ່ານພວກມັນແລ້ວບໍ?






# ພວກເຮົາມີງານແຈກປຶ້ມ!



ແນວຄິດ
ສຸດຍອດ!

ງານແຈກປຶ້ມໄດ້ກາຍເປັນວິທີອັນດັບໜຶ່ງໄປຢ່າງໄວວາ ໃນການນຳເອົາປຶ້ມໄປສູ່ຜູ້ອ່ານ. ກິດຈະກຳນີ້ກຳລັງດຳເນີນງານຢູ່ໃນປະຈຸບັນ ແລະ ມີການປ່ຽນແປງໃຫ້ນັບມື້ນັບດີຂຶ້ນ.



ທຳອິດ, ພວກເຮົາຕ້ອງໄປຮອດທີ່ນັ້ນກ່ອນ ເຊິ່ງບາງຄັ້ງຕ້ອງໄດ້ຂີ່ລົດ ຫຼື ເຮືອ. ເຖິງບ້ານຈະຢູ່ຫ່າງໄກສອກຫຼີກ ແຕ່ພວກເຮົາກໍ່ໄປ.

ພວກເຮົາລົມກ່ຽວກັບປຶ້ມ ແລະ ອ່ານນິທານສູ່ເດັກ. ການອ່ານປຶ້ມໃຫ້ຄົນອື່ນຟັງເປັນຄວາມຄິດໃໝ່ ແລະ ບໍ່ຄ່ອຍມີໃນບ້ານເຮົາ.



ການຫຼິ້ນເກມກາງແຈ້ງ
ເປັນການຜ່ອນຄາຍທີ່
ມ່ວນຊື່ນ ເຊິ່ງທີມງານ
ອ້າຍໜູນ້ອຍໄດ້ຄົ້ນຄິດ
ເກມຫຼາຍກວ່າ 20 ຊະ
ນິດ.





ຫຼັງຈາກນັ້ນ ຈະໃຫ້ເດັກ
ອອກມາເລືອກເອົາປຶ້ມ
ຜູ້ລະໜຶ່ງຫົວ. ສ່ວນ
ຫຼາຍຈະເປັນປຶ້ມອ່ານ
ເສີມຫົວທຳອິດທີ່ເຂົາ
ເຈົ້າມີໄວ້ໃຊ້ເປັນຂອງ
ຕົນເອງ.

ໃນຕອນທ້າຍຂອງແຕ່
ລະງານ ພວກເຮົາຈະ
ມອບປຶ້ມປະມານ 90
ຫົວໃຫ້ແຕ່ລະຫ້ອງ
ຮຽນ ເພື່ອໃຫ້ນັກຮຽນ
ອ່ານໃນແຕ່ລະມື້.



# ພວກເຮົາສືບຕໍ່ຈັດພິມປຶ້ມເພີ່ມອີກ:





ແຕ່ປຶ້ມຮຽນອັກສອນ, ຄຳສຸພາສິດ ຮອດ ສາລະຄະດີ, ສຸຂະພາບ ແລະ ສະພາບແວດລ້ອມ...







ແຕ່ ນິທານພື້ນເມືອງລາວ ຮອດ ເລື່ອງທີ່ນິຍົມກັນອ່ານໃນຕ່າງປະເທດ...

ພວກເຮົາສືບຕໍ່ຈັດງານແຈກປຶ້ມ ແລະ ຈັດພິມປຶ້ມຫຼາຍຂຶ້ນເລື້ອຍໆ.

ກ່ອນສິ້ນປີ 2007 ພວກເຮົາພິມປຶ້ມໄດ້ 33 ຫົວເລື່ອງ. ປະຈຸບັນ (2014) ໄດ້ 300 ກວ່າຫົວເລື່ອງ.



# ການຝຶກຊ້ອມພາສາອັງກິດ

ພວກເຮົາຍັງມີກິດຈະກຳໃໝ່ເພີ່ມເຕີມຢູ່ຮ້ານຂອງພວກເຮົາ ຄື: ບ່ອນຝຶກຊ້ອມພາສາອັງກິດ.

ຫຼວງພະບາງເຕັມໄປດ້ວຍໄວໜຸ່ມທີ່ຢາກຝຶກຊ້ອມພາສາອັງກິດ ແລະ ກໍ່ມີແຂກຫຼາຍຄົນຢາກຈະຊ່ວຍ. ສະນັ້ນ ໃນແຕ່ລະມື້ ພວກເຮົາຈະຈັດແຂກ ແລະ ຜູ້ສົນໃຈຝຶກຊ້ອມພາສາອັງກິດ ມາໂອ້ລົມ ສົນທະນາກັນ ເຊິ່ງຕອນເຊົ້າແມ່ນ 9:00 -11:00, ຕອນແລງ 5:00-7:00. ຜູ້ທີ່ມາຝຶກຊ້ອມພາສາຢູ່ຮ້ານຂອງພວກເຮົາຮອດ 2-3 ປີ ສາມາດປາກພາສາໄດ້ຢ່າງຄ່ອງແຄ້ວ ແລະ ຮຽນຮູ້ຫຼາຍສິ່ງຫຼາຍຢ່າງຈາກທົ່ວມູນໂລກ. ນອກນີ້ ພວກເຮົາຍັງມີຫໍສະໝຸດໄວ້ຄອຍບໍລິການຜູ້ສົນໃຈອ່ານປຶ້ມອີກດ້ວຍ.



# ນັກຂຽນໃໝ່

ການຊອກຫານັກແຕ້ມໜຸ່ມທີ່ມີພອນສະຫວັນຍັງຂ້ອນຂ້າງງ່າຍກວ່າການຊອກຫານັກຂຽນ. ປະເທດລາວມີຄົນຈຳນວນໜ້ອຍໄດ້ອ່ານປຶ້ມດີໆ ແລະ ປຶ້ມດີໆທີ່ຕ້ອງການອ່ານກໍ່ມີໜ້ອຍ. ລອງຄິດຈິນຕະນາການເບິ່ງວ່າ ເຮົາຈະສອນໃຫ້ຄົນຂຽນປຶ້ມດີໆໄດ້ແນວໃດ?

ພວກເຮົາຢາກໄດ້ປຶ້ມອ່ານງ່າຍພຽງແປດໜ້າສຳລັບຜູ້ເລີ່ມຕົ້ນອ່ານ. ປຶ້ມແບບນີ້ ຕ້ອງໃຊ້ຄຳສັບງ່າຍໆ, ຊ້ຳກັນຫຼາຍໆເທື່ອ ແລະ ແຕ່ລະໜ້າມີພຽງປະໂຫຍກດຽວເທົ່ານັ້ນ. ແຕ່ສິ່ງສຳຄັນຕ້ອງມ່ວນ ແລະ ດຶງດູດໃຈເດັກນ້ອຍໃຫ້ຮຽນອ່ານ.

ນາງຄຳຫຼ້າ ລາວບໍ່ມີປະສົບການດ້ານການຂຽນຫຍັງທັງໝົດ ຕອນທີ່ນາງເຂົ້າມາເຮັດວຽກຢູ່ຫ້ອງການຂອງພວກເຮົາ. ແຕ່ພາຍຫຼັງການສຳມະນາດ້ານການຂຽນທີ່ພວກເຮົາຈັດຂຶ້ນຫຼາຍໆຄັ້ງ. ໃນທີ່ສຸດ ນາງກໍ່ໄດ້ຂຽນປຶ້ມ *"ກົບຫິວ"* ອອກມາ. ມັນເປັນປຶ້ມກ່ຽວກັບໂຕກົບທີ່ກິນຕັກແຕນ, ຈີ່ນາຍ, ໜອນ… ແຕ່ມັນກໍ່ຍັງຫິວຢູ່.

ໃນທີ່ສຸດ ມັນກໍ່ໄປພົບກັບງູຫິວໂຕໜຶ່ງ. ຈະມີຫຍັງເກີດຂຶ້ນບັ້ນທ້າຍ... ແຕ່ຄິດວ່າ ກົບຈະບໍ່ມ່ວນຊື່ນແນ່ນອນ!

# ຍິ່ງມີນັກຂຽນ ຍິ່ງມີປຶ້ມຫຼາຍ

ໃນຂະນະທີ່ວຽກງານພວມເຕີບໂຕ ພະນັກງານກໍ່ຫຼາຍຂຶ້ນເຊັ່ນດຽວກັນ. ລຸ່ມນີ້ແມ່ນບາງຄົນທີ່ຢາກໃຫ້ທ່ານໄດ້ພົບ:



ເຈມສ ໄດ້ເຂົ້າມາຮຽນພາສາອັງກິດຢູ່ຫ້ອງການຂອງພວກເຮົາ. ຫຼັງຈາກນັ້ນ ລາວກໍ່ໄດ້ເຮັດວຽກ ແລະ ຂຽນປຶ້ມຫຼາຍຫົວເຊັ່ນ: *ຊີວິດເທິງພູຫຼວງ, ເຢຍເປົາຄົນປູກເຂົ້າ, ທ້າວ ຈາດູ ແລະ ເສືອ...*



ວິສອນ ໄດ້ເລີ່ມເຮັດວຽກເປັນແມ່ຄົວໃຫ້ພວກເຮົາ. ນາງໄດ້ຮຽນຮູ້ທັກສະໃໝ່ໆ ແລະ ນາງໄດ້ຖືກເລືອກໃຫ້ເຮັດວຽກວຽກຢູ່ໜ້າຮ້ານ (ຂາຍປຶ້ມ) ຈາກນັ້ນ ນາງກໍ່ໄດ້ຂຽນປຶ້ມສີ່ຫົວອອກສູ່ສັງຄົມ.





ທີມງານແຈກປຶ້ມ 5 ຄົນນີ້ໄດ້ຂຽນປຶ້ມ "ມືມືມື": (ນັບຊ້າຍ-ຂວາ) ດວງດີ ບຸນໄຊຍະສິນ, ເສົາສຸລິນ ພັດທະນະກອນ, ເຫຼັກ ຫຼາໄຊຍະພັນ ແລະ ຄຳໄລ ສຸກສະຫວັນ.



ຫນໍ່ຫຼ້າ ຊ່ວຍວຽກບໍລິຫານຫ້ອງການ ແລະ ວຽກງານບັນນາທິການ. ລາວໄດ້ ຂຽນປຶ້ມວິທີເຮັດອາຫານພື້ນເມືອງ ລາວ, ປຶ້ມອ່ານງ່າຍກ່ຽວກັບດອກໄມ້ ແລະ ປຶ້ມອ່ານງ່າຍໃນຊຸດມ່ວນກັບ ການອ່ານຫຼາຍໆເຫຼັ້ມ.



ກອງສີ ຊ່ວຍວຽກງານເຕັກນິກ ແລະ ຄຸມກິດຈະກຳງານແຈກປຶ້ມຫ້ອງການ. ລາວໄດ້ຖ່າຍວີດີໂອ ແລະ ຮູບພາບງາມໆ ກ່ຽວກັບວິຖີຊີວິດຂອງຄົນລາວ, ສັງຄົມ, ວັດທະນະທຳ ເຊິ່ງໄດ້ນຳໃຊ້ຢູ່ໃນປຶ້ມ ຫຼາຍໆຫົວຂອງພວກເຮົາ.

# ເສີມຂະຫຍາຍຄວາມຮັກມັກປຶ້ມ

ພວກເຮົາໄດ້ພັດທະນາຫຼາຍວິທີການ ເພື່ອເສີມສ້າງ ແລະ ປັບປຸງງານແຈກປຶ້ມຂອງພວກເຮົາໃຫ້ສົມບູນຢູ່ຕາມໂຮງຮຽນແຫ່ງຕ່າງໆ ທັງໃນຕົວເມືອງ ແລະ ເຂດຊົນນະບົດ.



**ຮຽນຮູ້ການນຳໃຊ້ປຶ້ມ:** ທ້າວ ຄິດ ໄດ້ເຂົ້າມາຮ່ວມງານສຳມະນາລ້າງຂອງພວກເຮົາ ແລະ ໄດ້ຮຽນຮູ້ວິທີອ່ານປຶ້ມສູ່ເດັກ.



**ຫ້ອງອ່ານບ້ານ:** ວັນນາລີ ອາສາເຮັດຫ້ອງອ່ານບ້ານຢູ່ເຮືອນຂອງລາວ ເພື່ອໃຫ້ຊາວບ້ານໄດ້ມານຳໃຊ້. ຕອນນີ້ ລາວເປັນພະນັກງານອ້າຍໜູນ້ອຍ ຊ່ວຍວຽກເລຂາຫ້ອງການ ແລະ ເຄື່ອນໄຫວວຽກງານສົ່ງເສີມການອ່ານ.



**ໄປຢັ້ຽມຢາມໝູ່ບ້ານ:** ຢູ່ໃນບ້ານຊິນນະບົດ ທ້າວສອນໄດ້ຊ່ວຍເດັກນ້ອຍນຳໃຊ້ປຶ້ມ "ການປະດິດເຄື່ອງຫຼິ້ນພື້ນເມືອງ" ຂອງພວກເຮົາ ເພື່ອສ້າງຄວາມຄິດແກ່ເດັກ.

**ວັນແຫ່ງການຮຽນຮູ້:** ເດັກຈະໄດ້ເຮັດກິດຈະກຳຫຼາຍຢ່າງໂດຍການສຳຜັດດ້ວຍຕົນເອງ ນັບແຕ່ການປະດິດເຄື່ອງຫຼິ້ນຮອດວິທີການອ່ານປຶ້ມ...





**ການຝຶກອົບຮົມ:** ໃນປີ 2013 ພວກເຮົາໄດ້ຝຶກອົບຮົມນາຍຄູກວ່າ 500 ຄົນ ກ່ຽວກັບວິທີການນຳໃຊ້ປຶ້ມຢູ່ໃນໂຮງຮຽນ.

# ມັນໃຊ້ໄດ້ຜົນບໍ່?

ເມື່ອພວກເຮົາປະເມີນເບິ່ງຜົນໄດ້ຮັບເຫັນວ່າ ນັກຮຽນຮັກມັກໃນການອ່ານ ແລະ ມີຄວາມກະຕືລືລົ້ນໃນການຮຽນຫຼາຍຂຶ້ນ. ດັ່ງດຽວກັບອີງການອື່ນກໍ່ສັງເກດການພວກເຮົາເຊັ່ນກັນ.



ພວກເຮົາໄດ້ຮັບໃບຢັ້ງຢືນວຽກງານດີພິເສດ ຈາກກອງປະຊຸມໃຫຍ່ໃນເອເຊຍຂອງປະທານາທິບໍດີ ບິວ ຄລິນຕັນ ເຊິ່ງຈັດຂຶ້ນຢູ່ຮົງກົງ ໃນປີ 2008.



ຫຼັງຈາກງານແຈກປື້ມສຳເລັດແລ້ວ ນັກຮຽນຈະພາກັນອ່ານປື້ມແລ້ວຈຶ່ງກັບບ້ານ.



**ບຸນທ່ຽງ ຄູສອນຢູ່ໂຮງຮຽນຫ້ວຍແຫວນ:** ປື້ມຂອງອ້າຍໜູນ້ອຍໄດ້ຊ່ວຍໃຫ້ເດັກນ້ອຍສະໜຸກສະໜານກັບການຮຽນ ແລະ ນັກຮຽນກໍ່ບໍ່ມັກຂາດໂຮງຮຽນຄືເມື່ອກ່ອນ.

ນາງຈັນທາ ອາຍຸເກົ້າປີ: “ຕອນນີ້ຂ້ອຍມັກອ່ານປື້ມໃນເວລາຫວ່າງ ແລະ ມັກອ່ານກັບໝູ່ຂອງຂ້ອຍ. ແຕ່ລະອາທິດຂ້ອຍຈະມາປ່ຽນປື້ມນຳນາຍຄູ ແລະ ເອົາປື້ມຫົວໃໝ່ໄປອ່ານໃຫ້ນ້ອງຊາຍຂອງຂ້ອຍຟັງ.









# ຄຳສັບດຽວທີ່ໜ້າຕື່ນເຕັ້ນ

ທ່ານຈະເຮັດໃຫ້ການອ່ານມ່ວນສຳລັບເດັກທີ່ສາມາດອ່ານພຽງແຕ່ຄຳສັບດຽວໄດ້ແນວໃດ? ພວກເຮົາໄດ້ປະດິດວິທີທີ່ຈະເຮັດໃຫ້ການອ່ານມ່ວນ ແລະ ຕື່ນເຕັ້ນສຳລັບເດັກນ້ອຍ.

ທ້າວ ບຸນຍັງ ໄດ້ຂຽນປຶ້ມ “ກິນ ກິນ ກິນ” ເຊິ່ງພຽງແຕ່ສາຍຕາຈ້ອງເບິ່ງຮູບພາບ, ຄຳສັບ ຫຼື ປະໂຫຍກສັ້ນໆ ມັນກໍ່ຕື່ນເຕັ້ນແລ້ວ. ຜູ້ທີ່ຮູ້ພາສາອັງກິດກໍ່ສາມາດອ່ານຄຳສັບພາສາອັງກິດໃຫ້ເດັກຟັງໄດ້ເຊັ່ນກັນ.

ນອກນີ້ພວກເຮົາຍັງໄດ້ຈັດພິມປຶ້ມຊຸດພິເສດເຊິ່ງເອີ້ນວ່າ “ເຮົາອ່ານໄດ້!” ເຊິ່ງມີທັງໝົດ #7 ລະດັບ. ແຕ່ລະລະດັບ ເດັກຈະມ່ວນຊື່ນກັບການຮຽນອັກສອນ ແລ້ວບໍ່ດົນເດັກຈະສາມາດອ່ານຄຳສັບ, ປະໂຫຍກສັ້ນ ແລະ ບົດເລື່ອງຕໍ່ໆໄປ...



# ມາຊ່ວຍກັນເຮັດໃຫ້ປະເທດລາວເປັນ
# ປະເທດທີ່ມັກອ່ານປຶ້ມ

ຄູຫຼາຍຄົນລາຍງານວ່າ ພາຍຫຼັງມີງານແຈກປຶ້ມ ນັກຮຽນມີຄວາມກະຕືລືລົ້ນໃນການຮຽນ, ມີທັກສະໃນການອ່ານດີຂຶ້ນ, ບໍ່ມັກຂາດໂຮງຮຽນ ຍ້ອນມີບັນຍາກາດ ແລະ ມີແຮງຈູງໃຈໃນການອ່ານຢູ່ໂຮງຮຽນ...

ຕອນເລີ່ມສ້າງຕັ້ງສຳນັກພິມອ້າຍໜູນ້ອຍຂຶ້ນໃນປີ 2006, ມີຫຼາຍຄົນເວົ້າວ່າ "ຄົນລາວບໍ່ມັກອ່ານ." ແລະ ມັນກໍ່ແມ່ນຄວາມຈິງໃນຕອນນັ້ນ.

ແຕ່ດຽວນີ້ບໍ່ເປັນຄວາມຈິງແລ້ວ ແລະ ອີກບໍ່ເທົ່າໃດປີຂ້າງໜ້າ ລາວຈະເປັນປະເທດທີ່ມັກອ່ານປຶ້ມ. ເຊິ່ງມັນຈະເປັນຂໍກະແຈອັນສຳຄັນແກ່ການພັດທະນາການສຶກສາຂອງລາວ ແລະ ຈະສາມາດເປັນຕົວແບບແກ່ປະເທດອື່ນອີກດ້ວຍ.

# ພວກເຮົາຈະຊ່ວຍກັນສົ່ງເສີມການອ່ານໄດ້ແນວໃດ?





- ໂຮງຮຽນຕ້ອງມີປຶ້ມອ່ານ ແລະ ຄູຕ້ອງໃຫ້ນັກຮຽນອ່ານຢ່າງໜ້ອຍ 15ນາທີ ໃນແຕ່ລາລະມື້...
- ເຮືອນກໍ່ຕ້ອງມີປຶ້ມອ່ານ ພໍ່ແມ່ຄວນຊອກຊື້ປຶ້ມອ່ານດີໆມ່ວນໆ ມາອ່ານສູ່ລູກຫຼານຟັງໃນແຕ່ລະມື້. ອ້າຍ, ເອື້ອຍ ກໍ່ຕ້ອງອ່ານສູ່ນ້ອງຟັງ ຫຼື ອ່ານນຳໝູ່ຄູ່ໃຫ້ເປັນຂະບວນຟົດຟື້ນ...
- ຜູ້ມີທຸລະກິດດີ ກໍ່ຄວນຊ່ວຍອຸປະຖຳງານແຈກປຶ້ມຢູ່ໂຮງຮຽນທີ່ທຸກຍາກ ເຊິ່ງໃຊ້ງົບປະມານພຽງ 3,200,000ກີບຕໍ່ໜຶ່ງໂຮງຮຽນ. ນັກຮຽນແຕ່ລະຄົນຈະໄດ້ປຶ້ມເປັນຂອງຕົນເອງຜູ້ລະໜຶ່ງຫົວ ແລະ ໂຮງຮຽນກໍ່ຈະໄດ້ 500ຫົວ ໄວ້ໃຫ້ນັກຮຽນ ແລະຄູ ອ່ານທຸກໆມື້.

ຫຼື ອຸປະຖຳຈັດພິມປຶ້ມ ພຽງ 8,000,000ກີບ ພວກເຮົາສາມາດພິມປຶ້ມໄດ້ 15,000ຫົວ ແລະ ທ່ານສາມາດ ລົງໂຄສະນາທຸລະກິດຂອງທ່ານ ຫຼື ຂຽນຄຳຂວັນ ຫຼື ຂຽນຄຳອຸທິດ ແກ່ບຸກຄົນທີ່ຕົນເອງຮັກ ຫຼື ຊື່ນຊອບ...

ຖ້າມີໜ້າເຈ້ຍຫວ່າງ

ຂ້ອຍຈະຂຽນຕໍ່....




## ...ແຕ່ເວັບໄຊຂອງພວກເຮົາມີຂໍ້ມູນຫຼາຍຢ່າງ:

1. ເບິ່ງຮູບພາບ ແລະ ອ່ານບົດລາຍງານສັ້ນໆຈາກງານແຈກປຶ້ມຢູ່ໂຮງຮຽນແຫ່ງຕ່າງໆໃນເຂດຊົນນະບົດທີ່ຫຼາຍກວ່າ 1,000ງານ. (Photo Album)
2. ຮຽນຮູ້ກ່ຽວກັບການສະໜັບສະໜູນງານແຈກປຶ້ມ ແລະ ການສ້າງມູມອ່ານໃນຫ້ອງຮຽນ. (Link on Home Page)
3. ເບິ່ງຂໍ້ມູນລະອຽດກ່ຽວກັບປຶ້ມທີ່ພວກເຮົາໄດ້ຈັດພິມແລ້ວ ແລະ ເບິ່ງໜ້າປຶ້ມເປັນຕົວຢ່າງ. (Books)
4. ອ່ານຂ່າວຂອງພວກເຮົາ. (Contact Us)
5. ເບິ່ງປຶ້ມທີ່ຕ້ອງການຜູ້ສະໜັບສະໜູນ. (Donate)
6. ອ່ານສິ່ງທີ່ຄູ-ອາຈານເວົ້າກ່ຽວກັບການອ່ານ. (About Us)

ອ້າຍໝູນ້ອຍເອີຍ ຂ້ອຍຄິດວ່າເຈົ້າຈະກາຍເປັນຕຳນານແລ້ວ!





ຍັງເທື່ອ! ໃຫ້ຂ້ອຍອ່ານປຶ້ມຂອງຂ້ອຍຈົບກ່ອນ!







ທີ່ສຳນັກພິມອ້າຍໝູນ້ອຍເຈົ້າສາມາດ:

- ມາອ່ານປຶ້ມທີ່ໜ້າສົນໃຈ ເຊິ່ງມີຫຼາຍກວ່າ 300ຊະນິດ...
- ຝຶກສ້ອມພາສາອັງກິດລ້າໆ ນຳຕ່າງປະເທດໂດຍກົງ...
- ຢືມປຶ້ມຢູ່ຫໍສະໝຸດ ແລະ ເຄື່ອງຫຼິ້ນຕ່າງໆຕາມໃຈມັກ...
- ຮຽນຮູ້ວຽກງານສົ່ງເສີມການອ່ານທີ່ໃຊ້ຕົ້ນທຶນຖືກທີ່ສຸດ...
- ເລືອກຊື້ປຶ້ມດີໆ ມີສາລະ ທີ່ລາຄາຖືກທີ່ສຸດ! ເພື່ອເປັນຂອງຂວັນແກ່ລູກຫຼານ, ໝູ່ຄູ່ ແລະ ຄົນທີ່ຕົນເອງຮັກ ໃນໂອກາດວັນສຳຄັນຕ່າງໆ... ຫຼື ຊື້ໄວ້ອ່ານເສີມຄວາມຮູ້ຂະຫຍາຍປັນຍາຂອງຕົນ...

ຫ້ອງການເປີດທຸກໆວັນແຕ່ 8:00ເຊົ້າ-7:00ແລງ. ຍົກເວັ້ນວັນພັກດັ່ງລຸ່ມນີ້:
1 ມັງກອນ, 8 ມີນາ, ປີໃໝ່ລາວ (ປະມານ 14-16 ເມສາ), 1 ພຶດສະພາ, 1 ມິຖຸນາ.
ບຸນຊ່ວງເຮືອນ້ຳຄານ (ປະມານໃນເດືອນ9), 7 ຕຸລາ ແລະ 2 ທັນວາ.

**ອ້າຍໝູນ້ອຍ 0351 ISBN 978-9932-03-235-8**